# ສຳມະນາ"ຕ້ານການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ"




*ຂ່າວ: ຣັດສະໝີ ດວງສັດຈະ

ທະນາຄານແຫ່ງ ສປປ ລາວ (BOL) ແລະ ທະນາຄານໂລກ (WB) ໄດ້ຮ່ວມກັນຈັດສຳມະນາ ພາຍໃຕ້ຫົວຂໍ້ **"ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ"** ໄລຍະທີ III ໂດຍການເປັນປະທານຮ່ວມຂອງທ່ານ ເລື່ອນ ວົງພະນະຄອນ ຫົວໜ້າໜ່ວຍງານຂໍ້ມູນຕ້ານການຟອກເງິນ ທະນາຄານແຫ່ງ ສປປ ລາວ ແລະ ທ່ານ Chris BATT ຊ່ຽວຊານຈາກ WB ແລະ ນັກສຳມະນາ ກອນຈາກອົງການປົກປ້ອງການກົດໝາຍ, ກະຊວງ ແລະ ຂະແໜງການຕ່າງໆກໍໄດ້ເຂົ້າຮ່ວມຊຶ່ງໄດ້ຈັດຂຶ້ນ ເມື່ອວັນທີ່ 1 ກຸມພາ ແລະ ຈະສຳເລັດໃນວັນທີ 5 ຂອງເດືອນດຽວກັນ.

ການຈັດສຳມະນາຄັ້ງນີ້ເປັນຄັ້ງທີສາມ ຊຶ່ງຖືເປັນຄັ້ງສຸດທ້າຍຂອງການປະຕິບັດໂຄງການດັ່ງກ່າວ, ຈຸດປະສົງຕົ້ນຕໍຂອງການສຳມະນາ ກໍ່ເພື່ອຍົກລະດັບຄວາມຮັບຮູ້ກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ໃຫ້ແກ່ເຈົ້າໜ້າທີ່ຂອງລາວທີ່ຮັບຜິດຊອບ

ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຢູ່ໃນແຕ່ລະຂົງເຂດ, ພ້ອມດຽວກັນກໍ່ເພື່ອຍົກລະດັບຂີດຄວາມສາມາດໃນການວິເຄາະບົດລາຍງານ ທີ່ໄດ້ຮັບຈາກທະນາຄານທຸລະກິດຊຶ່ງພົວພັນເຖິງການຊໍາລະສະສາງທີ່ສົງໃສວ່າເປັນການຟອກເງິນ (STR) ລວມທັງການສ້າງພະນັກງານລາວ ໃຫ້ເປັນນັກວິທະຍາກອນຜູ້ບັນຍາວຽກງານດັ່ງກ່າວ.

ການສໍາມະນະໄລຍະທີ I ໄດ້ຈັດຂຶ້ນໃນກາງເດືອນສິງຫາຂອງປີ 2009 ໂດຍແມ່ນວິທະຍາກອນຈາກ WB, ໄລຍະທີ II ຈັດຂຶ້ນໃນເດືອນຕຸລາຂອງປີດຽວກັນໂດຍນໍາໃຊ້ວິທະຍາກອນຮ່ວມກັນຈາກ WB ແລະ ສປປ ລາວ ແລະ ໃນການສໍາມະນາຄັ້ງນີ້ຈະເປັນຄັ້ງລ່າສຸດໂດຍແມ່ນນັກວິທະຍາຈາກ ສປປ ລາວ ທັງນີ້ກໍ່ເພື່ອເຮັດໃຫ້ທຸກຄົນທີ່ເຂົ້າຮ່ວມໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (CAML/CFT) ຮ່ວມກັບພາກພື້ນ ແລະ ຊາວໂລກໃນຖານະທີ່ ສປປ ລາວ ເປັນສະມາຊິກຂອງອົງການສະຫະປະຊາຊາດ (UN) ແລະ ກຸ່ມຕ້ານການຟອກເງິນພາກພື້ນເອເຊຍ ແລະ ປາຊີຟິກ (ກຸ່ມ APG).